
ເຫດຜົນສຳລັບການຂອບພຣະຄຸນ ແລະ ການອະທິຖານ
www.philmckay.com
ບົດຮຽນທີ 2 ສຳລັບສະບາໂຕ10 ມັງກອນ 2026

“ເຮົາແນ່ໃຈວ່າພຣະ
ອົງຜູ້ຊົງຕັ້ງຕົ້ນການ
ດີໄວ້ໃນພວກເຈົ້າ
ແລ້ວ ຈະຊົງກະທຳ
ໃຫ້ສຳເລັດ ຈົນເຖິງ
ວັນແຫ່ງພຣະເຢ
ຊູຄຣິດເຈົ້າ”

ຟລປ 1:6



ຊ່ວງເວລານັ້ນບໍ່ແມ່ນເລື່ອງທີ່ງ່າຍສຳລັບ ອຈ ໂປໂລ. ມັນຈະເປັນເລື່ອງງ່າຍຫລາຍສຳລັບການທີ່ລາວຈະຍອມແພ້ຕໍ່ຄວາມສິ້ນຫວັງໃນເວລາທີ່ສູນເສຍອິດສະຫລະພາບນັ້ນ

ຢ່າງໃດກໍ່ຕາມ, ດັ່ງທີ່ລາວໄດ້ຮ້ອງບົດເພງສັນຣະເສີນໃນຄຸກຢູ່ທີ່ເມືອງຟີລິບປອຍ, ອຈ ໂປໂລ ຍັງໄດ້ມີເຫດປົນສຳລັບການທີ່ຈະຂອບພຣະຄຸນພຣະເຈົ້າ ແລະຖ່າຍທອດເຫດຜົນທີ່ຈະຂອບພຣະຄຸນນີ້ໄປສູ່ພີ່ນ້ອງໃນຄວາມເຊື່ອທີ່ຢູ່ໃນເມືອງ ຟີລິບປອຍ ແລະ ໂກໂລຊາຍ

ການຕິດຄຸກຂອງລາວບໍ່ໄດ້ເຮັດໃຫ້ລາວຢຸດໃນການຕິດຕໍ່ກັບພຣະບິດາ ແລະການອະທິຖານເພື່ອຜູ້ອື່ນ.





- ເຫດຜົນສຳລັບການຂອບພຣະຄຸນ ແລະ ການອະທິຖານໃນຈົດໝາຍຫາເມືອງຟີລິບປອຍ:
  - ເຫດຜົນທີ່ຄວນຈະຂອບພຣະຄຸນ (ຟລປ 1:3-8)
  - ຄຳຮ້ອງຂໍໃນການອະທິຖານ (ຟລປ 1:9-11)
- ການຂອບພຣະຄຸນ ແລະ ການອະທິຖານໃນເວລາທີ່ທຸກຍາກລຳບາກ (ຟລປ 1:12-18)
- ເຫດຜົນສຳລັບການຂອບພຣະຄຸນ ແລະ ການອະທິຖານໃນຈົດໝາຍຫາເມືອງໂກໂລຊາຍ:
  - ເຫດຜົນທີ່ຄວນຈະຂອບພຣະຄຸນ (ກລຊ 1:3-8)
  - ຄຳຮ້ອງຂໍໃນການອະທິຖານ (ກລຊ1:9-12)


ເຫດຜົນສຳລັບການ
ຂອບພຣະຄຸນ ແລະ ການ
ອະທິຖານໃນຈົດໝາຍຫາ
ເມືອງຟີລິບປອຍ

# ເຫດຜົນທີ່ຄວນຈະຂອບພຣະຄຸນສະເໝີ





"ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າໄວ້ແລ້ວ ຈະຊົງກະທຳໃຫ້ສຳເລັດຈົນເຖິງວັນແຫ່ງພຣະເຢຊູເຈົ້າ" (ຟລປ 1:6)

ອຈ ໂປໂລ ເລີ່ມຕົ້ນຂຽນຈົດໝາຍຂອງລາວໂດຍການຂອບພຣະຄຸນພຣະເຈົ້າສໍາລັບຜູ້ເຊື່ອທີ່ຢູ່ໃນເມືອງຟີລິບປອຍ (ຟລປ. 1:3), ຜູ້ທີ່ລາວຮັກຢ່າງສຸດຊຶ້ງ (ຟລປ. 1:8).



ລາວປຽບດັ່ງມະຫາປະໂລຫິດໄດ້ສວມແຜ່ນປະດັບໄວ້ທີ່ໜ້າເອິກໃກ້ກັບຫົວໃຈຂອງລາວ, ເຊິ່ງມີຊື່ຂອງຊົນຊາດອິດສະຣາເອນແກະສະຫລັກໄວ້ເທິງອັນຍະມະນີເມື່ອລາວຢືນຢູ່ຕໍ່ໜ້າພຣະເຈົ້າ, ແລະລາວໄດ້ແບກຮັບສະມາຊິກແຕ່ລະຄົນ "ໄວ້ໃນຫົວໃຈຂອງລາວ" ຕອນທີ່ລາວໄດ້ຢືນຢູ່ຕໍ່ໜ້າພຣະອົງໃນການອະທິຖານເພື່ອພວກພີ່ນ້ອງ (ຟລປ. 1:7).

ຄວາມກະຕັນຍູຂອງລາວ ລວມເຖິງຄວາມຈິງທີ່ຊາວຟີລິບປອຍຍັງຄົງຊື່ສັດຕໍ່ພຣະກິດຕິຄຸນຂອງພຣະເຈົ້ານັ້ນ ເຮັດໃຫ້ພວກເຂົາມີຄວາມສົມບູນຂຶ້ນທຸກມື້. (ຟລປ. 1:5-6).

ເຫດຜົນທີ 3 ສໍາລັບການຂອບພຣະຄຸນແມ່ນການທີ່ຊາວຟີລິບປອຍໄດ້ເຂົ້າຮ່ວມກັບລາວໃນການ "ທີ່ລາວໄດ້ຕິດຄຸກ ແລະ ການປົກປ້ອງ ແລະ ຢືນຢັງຂ່າວປະເສີດ" (ຟລປ. 1:7).



# ຄຳຮ້ອງຂໍໃນການອະທິຖານ

"ເຮົາພາວັນນາອະທິຖານຂໍໃຫ້ຄວາມຮັກຂອງພວກເຈົ້າໃຫຍ່ຂຶ້ນຢູ່ສະເໝີ ຈົນເກີດມີຄວາມຮູ້ອັນແທ້ຈິງ ແລະ ຄວາມເຂົ້າໃຈອັນຄົບຖ້ວນບໍຣິບູນ. ເພື່ອເຈົ້າທັງຫລາຍຈະສັງເກດໄດ້ວ່າ ສິ່ງໃດປະເສີດທີ່ສຸດ ແລະ ເພື່ອພວກເຈົ້າຈະເປັນຄົນບໍຣິສຸດບໍ່ມີທີ່ຕິຕຽນໄດ້ໃນວັນແຫ່ງພຣະຄຣິສ. ຈະໄດ້ເປັນຜູ້ບໍຣິສຸດດ້ວຍຜົນຂອງຄວາມຊອບທຳ. ເຊິ່ງເກີດຂຶ້ນດ້ວຍພຣະເຢຊູຄຣິດເຈົ້າ ເພື່ອຖວາຍພຣະກຽດ ແລະ ຄຳຍ້ອງຍໍສັນຣະເສີນແດ່ພຣະເຈົ້າ.." (ຟລປ 1:9-11)




ພວກເຮົາສາມາດພິຈາລະນາຄຳອະທິຖານຂອງອັກຄະສາວົກໂປໂລດັ່ງ "ເຫດຜົນທີ່ເຊື່ອມໂຍງກັນ" ໄດ້(ຟລປ. 1:9-11):

- ຂໍໃຫ້ຄວາມຮັກເຕີບໂຕ
- ມັນຈະເຮັດໃຫ້ພວກເຈົ້າມີຄວາມຮູ້ອັນແທ້ຈິງ
- ເພື່ອຈະສາມາດແຍກໄດ້ວ່າ ສິ່ງໃດທີ່ປະເສີດທີ່ສຸດ
- ເພື່ອພວກເຈົ້າຈະເປັນຄົນບໍຣິສຸດ
- ຈະໄດ້ເປັນຜົນຜ່ານພຣະເຢຊູຄຣິສ
- ເຊິ່ງເກີດຂຶ້ນໂດຍພຣະເຢຊູຄຣິສເຈົ້າ

ຄວາມຮັກຂອງພວກເຮົາຈະສາມາດ "ເພີ່ມທະວີຂຶ້ນເລື້ອຍໆໄດ້ຢ່າງໃດ"? ເປັນຫຍັງມັນຈຶ່ງມີຄວາມສຳຄັນຕໍ່ຊີວິດຂອງຄຣິສຕຽນ?






ການຂອບພຣະ
ຄຸນ ແລະ ການ
ອະທິຖານໃນ
ເວລາທີ່ທຸກ
ຍາກລຳບາກ

# ໂອກາດໃນການປົກປ້ອງຂ່າວປະເສີດ

"ພີ່ນ້ອງທັງຫລາຍຂອງເຮົາເອີຍ, ເຮົາຢາກໃຫ້ພວກເຈົ້າຮູ້ວ່າ ເຫດການທີ່ເກີດຂຶ້ນກັບເຮົານັ້ນ ກໍ່ເພື່ອໃຫ້ຂ່າວປະເສີດແຜ່ອອກໄປ (ຟລປ 1:12)



ເມື່ອຊາວຟີລິບປອຍໄດ້ຮູ້ວ່າ ອຈ ໂປໂລໄດ້ກຳລັງຕິດຄຸກຢູ່ທີ່ກຸງໂຣມ ພວກເຂົາກໍ່ເສຍໃຈຫລາຍ, ແລະ ພວກເຂົາກໍ່ໄດ້ສົ່ງ ເອປາໂຟດີໂຕ ໄປຊ່ວຍເຫລືອ ອຈ ໂປໂລ (ຟລປ. 4:18).



ແທນທີ່ຈະເສຍໃຈຍ້ອນຕິດຄຸກ, ອຈ ໂປໂລ ໄດ້ຂອບພຣະຄຸນພຣະເຈົ້າສຳລັບການຕິດຄຸກນັ້ນ. ເປັນຫຍັງຈຶ່ງຂອບພຣະຄຸນ? ຍ້ອນແບບນີ້ເອງ ລາວຈຶ່ງສາມາດປະກາດຂ່າວປະເສີດໃຫ້ກັບຜູ້ຄົນທີ່ລາວບໍ່ສາມາດເຂົ້າເຖິງໄດ້ (ຟລປ. 1:13).

ຫລາຍໄປກວ່ານັ້ນ, ເມື່ອໄດ້ເຫັນຂ່າວຂອງອັກຄະທູດໂປໂລ, ພີ່ນ້ອງທີ່ມີຄວາມເຊື່ອຄົນອື່ນໆໄດ້ຮັບການໜູນໃຈຂຶ້ນ, ແລະໄດ້ເລີ່ມປະກາດຂ່າວປະເສີດທ່າມກາງຄວາມທຸກຍາກລຳບາກ (ຟລປ. 1:14).





ເຖິງວ່າມີບາງຄົນພະຍາຍາມປະກາດແບບບໍ່ຈິງໃຈເພື່ອຫວັງສ້າງຄວາມເດືອດຮ້ອນໃຫ້ກັບ ອຈ ໂປໂລຫລາຍຂຶ້ນ. ແຕ່ລາວກໍ່ຂອບໃຈພວກເຂົາ ແລະ ມີຄວາມຍິນດີ ແລະ ຄົງຈະມີຄວາມຍິນດີຕໍ່ໄປ (ຟລປ. 1:15-18).


ເຫດຜົນສໍາລັບການ
ຂອບພຣະຄຸນ ແລະ
ການອະທິຖານໃນຈົດໝ
າຍຫາເມືອງໂກໂລຊາຍ

# ເຫດຜົນໃນການຂອບພຣະຄຸນ

“ພວກເຮົາກໍໂມທະນາຂອບພຣະຄຸນພຣະເຈົ້າ ພຣະບິດາເຈົ້າຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາຢູ່ສະເໝີ” (ກລຊ 1:3)

ຄືກັນກັບຈົດໝາຍທີ່ສົ່ງໄປເມືອງ ໂກຣິນໂທ (1 ກຣທ 13:13) ອຈ ໂປໂລໄດ້ ຂອບພຣະຄຸນພຣະເຈົ້າສຳລັບທີ່ຊາວໂກໂລຊາຍໄດ້ມີ 3 ສິ່ງນີ້ໃນຖານະເປັນຄຣິສ ຕຽນ: ຄວາມເຊື່ອ, ຄວາມຫວັງ ແລະ ຄວາມຮັກ (ກລຊ. 1:4-5).






ຄຸນນະທຳເຫລົ່ານີ້ໄດ້ມີຢູ່ໃນ “ໃນພຣະເຢຊູ”, ແລະມີ ພື້ນຕໍ່ຄວາມສຳພັນລະຫວ່າງ “ຜູ້ເຊື່ອທັງໝົດ”, ແລະ ໄດ້ຖືກສົ່ງຕໍ່ມາເຖິງພວກເຮົາໂດຍຜ່ານ “ຄວາມຈິງ ຂອງຂ່າວປະເສີດ”.

ອຈ ໂປໂລ ໄດ້ຢ້ຳວ່າ ຂ່າວປະເສີດບໍ່ໄດ້ຖືກປະກາດ ໃຫ້ແກ່ສະເພາະຊາວໂກໂລຊາຍເທົ່ານັ້ນ, ແຕ່ “ປະກາດໄປທົ່ວໂລກ” (ກລຊ. 1:6)... ໃນໄລຍະ ເວລາພຽງແຕ່ 30 ປີ!



ພະລັງຂອງພຣະເຈົ້າ, ເຊິ່ງຖ່າຍທອດຜ່ານທາງຂ່າວປະເສີດ ໂດຍການເຮັດວຽກຂອງພຣະວິນຍານບໍຣິສຸດ, ເຮັດໃຫ້ພຣະ ຄຳພີເປັນ “ພຣະຄຳແຫ່ງຊີວິດ” (ຟລປ. 2:16). ເຊິ່ງໝາຍ ຄວາມວ່າ, ໂດຍການຍອມຮັບເອົາຂ່າວປະເສີດ, ພວກເຮົາກໍ່ ໄດ້ຮັບຊີວິດອັນນິຣັນ “ຊຶ່ງຮັກສາໄວ້ສຳລັບພວກເຈົ້າໃນ ສະຫວັນ” (Col. 1:5).

# ຄຳຮ້ອງຂໍໃນການອະທິຖານ

"ເພາະເຫດນີ້ ຕັ້ງແຕ່ວັນທີ່ເຮົາໄດ້ຍິນເຖິງເລື່ອງພວກເຈົ້າ ພວກເຮົາຈຶ່ງໄດ້ພາວັນນາອະທິຖານ ເພື່ອພວກເຈົ້າສະເໝີ ພວກເຮົາທູນຂໍພຣະເຈົ້າໂຜດໃຫ້ພວກເຈົ້າມີຄວາມຮອບຮູ້ເຖິງນ້ຳພຣະໄທຂອງພຣະອົງໃນພຣະປັນຍາກັບຄວາມເຂົ້າໃຈທຸກໆຢ່າງ ຊຶ່ງມາຈາກພຣະວິນຍານ" (ກລຊ 1:9)

ຄຳອະທິຖານຂອງ ອຈ ໂປໂລ ແມ່ນໄດ້ລວມເຖິງສິ່ງດີໆຫລາຍໆຢ່າງເພື່ອຊາວໂກໂລຊາຍ (ກລຊ. 1:9-11):



ຄຳອະທິຖານນີ້ແມ່ນບອກເຖິງ "ການຂອບພຣະຄູນດ້ວຍໃຈຍິນດີໃຫ້ແກ່ພຣະບິດາ" (ກລຊ. 1:12).

- ຫລາຍຄົນໄດ້ຮັບຄວາມຮູ້ຈາກພຣະເຈົ້າ, ເຊິ່ງຈະເຮັດໃຫ້ພວກເຂົາໄດ້ຮັບຄວາມສະຫລາດ ແລະ ເຂົ້າໃຈທາງດ້ານຈິດວິນຍານ
- ໃຊ້ຊີວິດເປັນດັ່ງບຸດຂອງພຣະເຈົ້າໂດຍການສັນຣະເສີນພຣະອົງທຸກເວລາ
- ຂໍໃຫ້ພວກເຂົາເກີດຜົນ ແລະ ເຕີບໂຕໂດຍພຣະວິນຍານບໍຣິສຸດ
- ຂໍໃຫ້ພວກເຂົາເຂັ້ມແຂງໂດຍພະລັງຂອງພຣະເຈົ້າເພື່ອພວກເຂົາຈະອົດທົນໄດ້

ມີ 4 ຊ່ອງທາງເຊິ່ງພຣະເຈົ້າໄດ້ເຮັດເພື່ອໃຫ້ຄຳອະທິຖານຂອງ ອຈ ໂປໂລ ສຳເລັດເປັນຈິງ ໃນພວກເຮົາ:



ຜ່ານທາງພຣະຄຳພີ (ພສສ 119:105)



ຜ່ານຈິດວິນຍານແຫ່ງຄຳພຣະຍາກອນ(ພນມ 19:10), ສຳແດງຜ່ານທາງປຶ້ມຂອງທ່ານນາງ ເອເລັນ ຈີ ໄວ໌



ໂດຍການຊົງນຳຂອງພຣະອົງ (ກລຊ. 4:3)



ຜ່ານທາງພຣະວິນຍານບໍຣິສຸດ (ອຊຢ. 30:21)

# ຂໍ້ຄິດເພີ່ມເຕີມ

ອັກຄະສາວົກໄດ້ຂອບພຣະຄຸນພຣະເຈົ້າສໍາລັບຫຍັງ ແລະ ໄດ້ອະທິຖານເພື່ອຜູ້ເຊື່ອແນວໃດ?

1. ການຂອບພຣະຄຸນ
    - ສໍາລັບຄວາມລອດຂອງພຣະອົງທີ່ມອບໃຫ້ແກ່ຜູ້ເຊື່ອ
    - ສໍາລັບການຊົງນໍາຂອງພຣະອົງທີ່ມີຕໍ່ພວກເຂົາ
    - ສໍາລັບພຣະພອນ ແລະ ການຊ່ວຍຂອງພຣະອົງ
    - ສໍາລັບຈິດວິນຍານທີ່ເຂັ້ມແຂງຂຶ້ນ
    - ສໍາລັບໂອກາດທີ່ຈະປະກາດຂ່າວປະເສີດໃນທຸກໆສະຖານະການ

2. ຄໍາອະທິຖານຂອງ ອັກຄະສາວົກ ແມ່ນເພື່ອ:
    - ໃຫ້ມີຄວາມຮັກທະວີຄູນຂຶ້ນເລື້ອຍໆ ຕໍ່ກັນແລະກັນ
    - ໃຫ້ຕັ້ງໝັ້ນໃນຄວາມເຊື່ອ
    - ໃຫ້ໃຊ້ທຸກໆໂອກາດເປັນການແບ່ງປັນ
    - ໃຫ້ຂອບພຣະຄຸນພຣະເຈົ້າສະເໝີ



# ອຈ ໂປໂລ ສອນໃຫ້ພວກເຮົາມີຄວາມກະຕັນຍູ ແລະ ຂອບພຣະຄຸນສະເໝີ ໂດຍການທີ່:



1. ຕ້ອງມີຄວາມໝັ້ນໃຈໃນຄວາມສຳເລັດຂອງພຣະເຈົ້າ

(ພຣະອົງຊົງເປັນຜູ້ເລີ່ມຕົ້ນ ແລະ ຜູ້ເຮັດໃຫ້ສຳເລັດ ໃນຄວາມເຊື່ອຂອງພວກເຮົາ)

2. ຕ້ອງຮັກສາພະລັງຂອງການເປັນຊຸມຊົນແຫ່ງຄວາມສຳພັນ (Koinonia): ສົ່ງເສີມ, ໜູນໃຈກັນ, ຮັກ ແລະ ແບ່ງປັນ

3. ຄວາມກະຕັນຍູຢ່າງມີລະບຽບວິໄນ

ເອົາຊະນະສະຖານະຕ່າງໆ: ຄວາມກົດດັນ, ຫລື ໃນເວລາທີ່ທຸກຍາກ ແລະ ຢ່າລືມຫາໂອກາດແບ່ງປັນພຣະຄຳ

4. ລະນຶກເຖິງພຣະກິດຕິຄຸນ

ຢ່າລືມວ່າທຸກສິ່ງທີ່ມີ, ທີ່ເຮັດໄດ້ ແລະ ຄວາມລອດ ແມ່ນມາຈາກພຣະອົງ

5. ໃຫ້ມີຈິດວິນຍານແຫ່ງຄວາມຊື່ສັດ

ລາວໄດ້ອະທິຖານໃຫ້ຜູ້ເຊື່ອເກີດຜົນແຫ່ງພຣະວິນຍານບໍຣິສຸດ: ຄວາມຮັກ, ຄວາມເຊື່ອ, ຄວາມຫວັງ

"ຊີວິດຂອງພວກເຮົາຄວນຈະຜູກໄວ້ກັບຊີວິດຂອງພຣະຄຣິສ; ພວກເຮົາຄວນຮຽນຮູ້ຈາກພຣະອົງຢ່າງຕໍ່ເນື່ອງ, ມີສ່ວນຮ່ວມໃນວຽກງານຂອງພຣະອົງ, ຜູ້ຊຶ່ງເປັນເຂົ້າຈີ່ທີ່ລົງມາຈາກສະຫວັນ, ເປັນແມ່ນ້ຳທີ່ໄຫລແບບບໍ່ມີວັນສິ້ນສຸດ, ເປັນແຫລ່ງຊັບສົມບັດທີ່ມອບໃຫ້ພວກເຮົາ. ຖ້າວ່າພວກເຮົາໃຫ້ພຣະອົງເປັນຜູ້ນຳໜ້າພວກເຮົາໄປ, ຍອມໃຫ້ໃຈຂອງພວກເຮົາມີຄວາມກະຕັນຍູ ແລະ ການຂອບພຣະຄຸນພຣະອົງຢູ່ສະເໝີ, ພວກເຮົາກໍ່ຈະມີຄວາມສົດຊື່ນໃນໃຈ ແລະ ໃນຊີວິດຂອງພວກເຮົາຢ່າງຕໍ່ເນື່ອງ, ຄຳອະທິຖານຂອງພວກເຮົາກໍ່ເປັນຄືກັບການສົນທະນາກັບພຣະອົງ. ພຣະອົງຈະເວົ້າຕໍ່ກັບພວກເຮົາເປັນການສ່ວນໂຕ. ຈະມີຄວາມປິຕິຍິນດີ ແລະ ການປະທັບຂອງພຣະອົງໃນພວກເຮົາເລື້ອຍໆ. ພວກເຮົາກໍ່ຈະຮູ້ສຶກຄືກັບວ່າພຣະອົງເຂົ້າມາໃກ້ພວກເຮົາເພື່ອການສົນທະນາຂຶ້ນເລື້ອຍໆ. ເມື່ອສິ່ງນີ້ກາຍເປັນປະສົບການຈິງໃນຊີວິດຂອງຄຣິສຕຽນ, ກໍ່ຈະປາກົດອອກມາໃນຊີວິດຂອງພວກເຂົາ: ຄວາມລຽບງ່າຍ, ຄວາມຖ່ອມ, ຄວາມອ່ອນໂຍນຂອງຈິດໃຈ ແລະ ທຸກຄົນກໍ່ຈະຮູ້ວ່າ ລາວໄດ້ຢູ່ກັບພຣະເຢຊູ ແລະ ໄດ້ຮຽນຮູ້ຈາກພຣະອົງ."

EGW (Christ's Object Lessons, p. 129)

ຊີວິດຂອງພວກເຮົາເປັນການເດີນທາງແຫ່ງຄວາມເຊື່ອ ເຮົາຄວນທີ່ຈະຮຽນຮູ້ ໃນການໄວ້ວາງໃຈໃນພຣະອົງ, ໃນແຜນການຂອງພຣະອົງຫລາຍກວ່າຕົນເອງ. ໃຫ້ພຣະອົງຊົງນໍາພວກເຮົາໄປເທື່ອລະກ້າວ ເພື່ອພວກເຮົາຈະໄດ້ຮັບການບົ່ມສອນ ໃຫ້ກາຍເປັນຄົນທີ່ເຕັມໄປດ້ວຍການອະທິຖານ ຂໍຄວາມຮັກ ທີ່ເຕີບໂຕດ້ວຍຄວາມຮູ້ ແລະ ສະຕິປັນຍາ ເພື່ອທີ່ຈະເບິ່ງຄວາມທ້າທາຍ ແລະ ອຸປະສັກໃຫ້ກາຍເປັນໂອກາດ.